# ການປ່ຽນແປງກ່ຽວກັບກົດລະບຽບການບໍ່ນັບລວມເປັນລາຍໄດ້/ການສົ່ງເງິນ ຜ່ານໃຫ້ຂອງ ໂຄງການ ໂອກາດໃນການເຮັດວຽກແລະຄວາມຮັບຜິດຊອບຕໍ່ເດັກນ້ອຍ (CALWORKs)

**ກົດລະບຽບກ່ຽວກັບການບໍ່ນັບລວມເປັນລາຍໄດ້/ການສົ່ງເງິນຜ່ານໃຫ້ຂອງໂຄງການຄ່າລ້ຽງດູເດັກນ້ອຍ CalWORKs ໄດ້ປ່ຽນແປງແລ້ວ.**

**ກົດລະບຽບເກົ່າ:**

ຖ້າທ່ານກຳລັງໄດ້ຮັບເງິນຊ່ວຍເຫຼືອ CalWORKs ສຳລັບລູກຂອງທ່ານ ແລະທ່ານຍັງໄດ້ຮັບເງິນຄ່າລ້ຽງດູເດັກນ້ອຍສຳລັບພວກເຂົາເຈົ້າ, ໃນກໍລະນີສ່ວນຫຼາຍທ່ານຈະໄດ້ຮັບເງິນຄ່າລ້ຽງດູເດັກນ້ອຍເຖິງ 50 ໂດລາທີ່ອົງການຄ່າລ້ຽງດູເດັກນ້ອຍທ້ອງຖິ່ນ (LCSA) ຂອງເມືອງຂອງທ່ານເຊິ່ງໄດ້ເກັບລວບລວມແລະນຳສົ່ງໃຫ້ທ່ານ ແລະຈຳນວນເງິນດັ່ງກ່າວແມ່ນບໍ່ຖືກນັບລວມເປັນລາຍໄດ້ ຫຼືບໍ່ຖືກນຳມາຄິດໄລ່ເມື່ອມີການກຳນົດສິດ CalWORKs ແລະໃນການກຳນົດສິດໄດ້ຮັບເງິນຊ່ວຍເຫຼືອລາ. ສຳລັບບາງກໍລະນີທີ່ກ່ຽວຂ້ອງກັບແຕ່ເດັກນ້ອຍເທົ່ານັ້ນ, ເງິນຄ່າລ້ຽງດູເດັກນ້ອຍທັງໝົດແມ່ນຈະຖືກນຳສົ່ງຜ່ານໄປໃຫ້ຄອບຄົວ, ແລະເປັນຈຳນວນເງິນເຖິງ 50 ໂດລາທີ່ບໍ່ຖືກນັບລວມເປັນລາຍໄດ້ ແລ້ວຈຶ່ງຈະນັບສ່ວນທີ່ເຫຼືອເປັນລາຍໄດ້.

ຄອບຄົວທີ່ໄດ້ຮັບສິດທິປະໂຫຍດ CalWORKs ເຊິ່ງໄດ້ຮັບເງິນຄ່າລ້ຽງດູເດັກນ້ອຍໂດຍກົງຈາກພໍ່ແມ່ທີ່ບໍ່ມີສິດປົກຄອງເດັກນ້ອຍ (Non-custodial Parent ຫຼື NCP), ຈະນຳໃຊ້ວິທີບໍ່ຖືກນັບລວມເປັນລາຍໄດ້ເຊັ່ນດຽວກັນ ແລ້ວຈຶ່ງຈະນັບສ່ວນທີ່ເຫຼືອເປັນລາຍໄດ້.

**ກົດລະບຽບໃໝ່:**

ເລີ່ມຕົ້ນວັນທີ 1 ເດືອນມັງກອນ ປີ 2022, ຫຼືເມື່ອການປ່ຽນແປງເຫຼົ່ານີ້ຖືກຈັດເຂົ້າໃນລະບົບຄອມພິວເຕີຂອງຄາວຕີ້, ແລ້ວແຕ່ວ່າເຫດການໃດຈະເກີດຂຶ້ນພາຍຫຼັງ, ຈຳນວນເງິນຄ່າລ້ຽງດູເດັກນ້ອຍໃໝ່ທີ່ຈະສົ່ງຜ່ານໃຫ້ (ສົ່ງໃຫ້ທ່ານ) ແລະບໍ່ຖືກນັບລວມເປັນລາຍໄດ້ຈະເພີ່ມຂຶ້ນເຖິງ 100 ໂດລາສຳລັບຄອບຄົວທີ່ມີເດັກນ້ອຍໜຶ່ງຄົນທີ່ເປັນບຸກຄົນມີສິດໄດ້ຮັບຄວາມຊ່ວຍເຫຼືອ (AU) ແລະສູງເຖິງ 200 ໂດລາສຳລັບຄອບຄົວທີ່ມີເດັກນ້ອຍສອງຄົນຫຼືຫຼາຍກວ່ານັ້ນທີ່ເປັນ AU. ກົດລະບຽບອື່ນໆກ່ຽວກັບຄ່າລ້ຽງດູເດັກນ້ອຍທີ່ບໍ່ຖືກນັບລວມເປັນລາຍໄດ້ຈະບໍ່ປ່ຽນແປງ.

**ການປ່ຽນແປງກ່ຽວກັບຄ່າລ້ຽງດູເດັກນ້ອຍແທນສິດກ່ຽວກັບທາງເລືອກໃນການໄດ້ຮັບຄວາມຊ່ວຍເຫຼືອລ້າເປັນເງິນສົດ (SB 380):**

ຖ້າທ່ານມີເດັກນ້ອຍທີ່ເປັນອ້າຍເອື້ອຍນ້ອງຄົນລະພໍ່ແລະຄົນລະແມ່ ຫຼືອ້າຍເອື້ອຍນ້ອງພໍ່ດຽວກັນຫຼືແມ່ດຽວກັນທີ່ບໍ່ໄດ້ລວມຢູ່ໃນໂຄງການເງິນຊ່ວຍເຫຼືອລ້າເປັນເງິນສົດ CalWORKs ຂອງທ່ານເພາະວ່າພວກເຂົາໄດ້ຮັບເງິນຄ່າລ້ຽງດູເດັກນ້ອຍ, ທາງເລືອກນັ້ນອາດຈະປ່ຽນໄປ. ຈຳນວນເງິນທີ່ບໍ່ຖືກນັບລວມເປັນລາຍໄດ້ທີ່ເພີ່ມຂຶ້ນຈະເຮັດໃຫ້ຈຳນວນເງິນຄ່າລ້ຽງດູເດັກນ້ອຍທີ່ລູກທ່ານຕ້ອງໄດ້ຮັບໃນແຕ່ລະເດືອນມີສິດໄດ້ຮັບການຍົກເວັ້ນຈາກເງິນຊ່ວຍເຫຼືອລ້າສຳລັບສະມາຊິກ AU ຂອງທ່ານ.

ທ່ານຈະໄດ້ຮັບແຈ້ງການກ່ຽວກັບການດຳເນີນການທີ່ຈະແຈ້ງໃຫ້ທ່ານຊາບວ່າເດັກນ້ອຍທີ່ເປັນອ້າຍເອື້ອຍນ້ອງຄົນລະພໍ່ແລະຄົນລະແມ່ ຫຼືອ້າຍເອື້ອຍນ້ອງພໍ່ດຽວກັນຫຼືແມ່ດຽວກັນຈະບໍ່ມີສິດເຂົ້າຮ່ວມໃນການໄດ້ຮັບຄວາມຊ່ວຍເຫຼືອຄ່າລ້ຽງດູເດັກນ້ອຍອີກຕໍ່ໄປແທນການໄດ້ຮັບຄວາມຊ່ວຍເຫຼືອລ້າເປັນເງິນສົດ ແລະເມື່ອໃດທີ່ພວກເຂົາເຈົ້າຈະຖືກໃສ່ກັບຄືນເຂົ້າໄປໃນໂຄງການຄວາມຊ່ວຍເຫຼືອລ້າເປັນເງິນສົດ ສຳລັບສະມາຊິກ AU ຂອງທ່ານ. ການປ່ຽນແປງນີ້ບໍ່ສາມາດເກີດຂຶ້ນໄດ້ໃນຊ່ວງການໄລຍະເວລາທີ່ໄດ້ຮັບຄວາມຊ່ວຍເຫຼືອ ເວັ້ນເສຍແຕ່ວ່າທ່ານຮ້ອງຂໍເອົາ. ຖ້າລູກຂອງທ່ານບໍ່ມີສິດໄດ້ຮັບການຍົກເວັ້ນຈາກຈຳນວນເງິນຊ່ວຍເຫຼືອລ້າເປັນເງິນສົດສຳລັບສະມາຊິກ AU ຂອງທ່ານອີກຕໍ່ໄປ ແລະທ່ານຕ້ອງການໃຫ້ໃສ່ພວກເຂົາເຈົ້າກັບຄືນເຂົ້າໄປໃນໂຄງການໄວກວ່ານີ້, ທ່ານຈະຕ້ອງແຈ້ງໃຫ້ທາງຄາວຕີ້ຂອງທ່ານຊາບ.

**ກະລຸນາຕິດຕໍ່ເຈົ້າໜ້າທີ່ທີ່ເຮັດວຽກກ່ຽວກັບກໍລະນີ CalWORKs ຂອງທ່ານຖ້າທ່ານມີຄຳຖາມກ່ຽວກັບການປ່ຽນແປງໃນກໍລະນີ CalWORKs ຂອງທ່ານ, ກົດລະບຽບກ່ຽວກັບການບໍ່ຖືກນັບລວມເປັນລາຍໄດ້ ຫຼືການໃສ່ເດັກນ້ອຍກັບຄືນເຂົ້າໄປໃນການຊ່ວຍເຫຼືອລ້າເປັນເງິນສົດສຳລັບສະມາຊິກ AU ຂອງທ່ານ. ກະລຸນາຕິດຕໍ່ເຈົ້າໜ້າທີ່ຄ່າລ້ຽງດູເດັກນ້ອຍຂອງທ່ານຖ້າທ່ານມີຄຳຖາມກ່ຽວກັບຄ່າລ້ຽງດູເດັກນ້ອຍຂອງທ່ານ. ທ່ານສາມາດຕິດຕໍ່ຫາອົງການຊ່ວຍເຫລືອເດັກນ້ອຍໃນທ້ອງຖິ່ນຂອງທ່ານໄດ້ທີ່ເບີ 1-866-901-3212.**

**ການປ່ຽນແປງກ່ຽວກັບແຄລເຟຣຊ (CalFresh):**

ການປ່ຽນແປງຄວາມຊ່ວຍເຫຼືອເປັນເງິນສົດຂອງທ່ານອາດຈະປ່ຽນແປງສິດທິປະໂຫຍດແຄລເຟຣຊຂອງທ່ານ.
**ທ່ານຈະໄດ້ຮັບແຈ້ງການອີກສະບັບໜຶ່ງແຍກຕ່າງຫາກຖ້າສິດທິປະໂຫຍດແຄລເຟຣຊຂອງທ່ານປ່ຽນແປງ.**